ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
***************

ກະຊວງການເງິນ
ກົມສ່ວຍສາອາກອນ

ເລກທີ 4104 /ກສອ
ນະຄອນຫຼວງວຽງຈັນ, ວັນທີ 22 OCT 2021

# ແຈ້ງການ

ເຖິງ: - ຫົວໜ້າ ສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງ
- ຫົວໜ້າ ສ່ວຍສາອາກອນປະຈຳເມືອງ, ນະຄອນ

ເລື່ອງ: ການຮັບຮອງຈົດທະບຽນເລກປະຈຳຕົວຜູ້ເສຍອາກອນ ເຂົ້າໃນລະບົບ TAXRIS ແລະ ການເຂົ້າລະບົບອາກອນມູນຄ່າເພີ່ມ

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ2019;
- ອີງຕາມ ຂໍ້ຕົກລົງຂອງທ່ານລັດຖະມົນຕີ ກະຊວງການເງິນ ສະບັບເລກທີ 2058/ກງ, ລົງວັນທີ 29 ເມສາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມສ່ວຍສາອາກອນ;
- ອີງຕາມ ບົດບັນທຶກກອງປະຊຸມ ລະຫວ່າງ ກົມສ່ວຍສາອາກອນ ແລະ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ສະບັບລົງວັນທີ 09 ມີນາ 2021.

ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດການຕິດຕາມ, ຄຸ້ມຄອງ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ຫົວໜ່ວຍທຸລະກິດທີ່ຂຶ້ນທະບຽນວິສາຫະກິດໃໝ່ ແລະ ເປັນການຫລຸດຂັ້ນຕອນ, ເວລາ ແລະ ຄ່າໃຊ້ຈ່າຍ ໃນການເລີ່ມຕົ້ນທຸລະກິດ ຂອງ ສປປ ລາວ ຕາມການປະເມີນຂອງທະນາຄານໂລກປີ 2020 ຈາກທັງໝົດ 9 ຂັ້ນຕອນ ມາເປັນ 3 ຂັ້ນຕອນ ເພື່ອຮັບຮອງການຈົດທະບຽນເລກປະຈຳຕົວຜູ້ເສຍອາກອນ ເຂົ້າໃນລະບົບ TAXRIS ໃຫ້ແກ່ ນິຕິບຸກຄົນ, ວິສາຫະກິດສ່ວນບຸກຄົນ ໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

ກົມສ່ວຍສາອາກອນ ອອກແຈ້ງການໃນການຈັດຕັ້ງປະຕິບັດ ລາຍລະອຽດດັ່ງນີ້:

1. ໃຫ້ສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງ, ເມືອງ ແລະ ນະຄອນ ນຳໃຊ້ ຄຳແນະນຳການປະຕິບັດພັນທະອາກອນ(ສຳລັບວິສາຫະກິດທີ່ເຂົ້າລະບົບອາກອນມູນຄ່າເພີ່ມ) ສະບັບເລກທີ 3671/ກສອ, ລົງວັນທີ 12 ຕຸລາ 2021 ແລະ (ຄຳແນະນຳການປະຕິບັດພັນທະອາກອນສຳລັບຈຸນລະວິສາຫະກິດ) ສະບັບເລກທີ 3672/ກສອ, ລົງວັນທີ 12 ຕຸລາ 2021 ແທນບົດບັນທຶກການປະຖົມນິເທດຕາມຮ່າງທີ່ກົມສ່ວຍສາອາກອນໄດ້ກຳນົດໄວ້ ;
2. ນຳສົ່ງຄຳແນະນຳການປະຕິບັດພັນທະອາກອນທັງສອງສະບັບ ສຳລັບວິສາຫະກິດຂຶ້ນໃໝ່ດັ່ງກ່າວ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ຕາມຂັ້ນຄຸ້ມຄອງຂອງຕົນ ໃຫ້ພຽງພໍ ແລະ ເປັນປົກກະຕິ (ບໍ່ໃຫ້ຂາດ) ເພື່ອໃຫ້ຫົວໜ່ວຍວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດແລ້ວ ໄດ້ລົງລາຍເຊັນບົດບັນທຶກດັ່ງກ່າວ ໃນເວລາມາຮັບເອົາໃບທະບຽນວິສາຫະກິດ ແລະ ຖືວ່າ ຫົວໜ່ວຍວິສາຫະກິດ ເຂົ້າໃຈ ແລະ ຮັບຮູ້ ການປະຕິບັດພັນທະອາກອນ ໃຫ້ໄປຕາມກົດໝາຍທີ່ກຳນົດ ໂດຍບໍ່ມີການປະຖົມນິເທດອີກ, ຊຶ່ງຄຳແນະນຳທັງສອງສະບັບ ສາມາດດາວໂລດເອົາໄດ້ຢູ່ http://taxris.mof.gov.la(ເວັບໄຊສຳລັບເຈົ້າໜ້າທີ່ສ່ວຍສາອາກອນ);

3. ພາຍຫລັງ ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ອອກທະບຽນວິສາຫະກິດແລ້ວ ໃຫ້ນຳສົ່ງສຳນວນສະໂນດທະບຽນວິສາຫະກິດ ພ້ອມຄຳແນະນຳທີ່ມີລາຍເຊັນຮັບຮູ້ຂອງວິສາຫະກິດ ໃຫ້ຂະແໜງສ່ວຍສາອາກອນ 1 ອາທິດຕໍ່ຄັ້ງ ຫລື ກ່ອນກຳນົດ ແລ້ວໃຫ້ເຈົ້າໜ້າທີ່ສ່ວຍສາອາກອນ ກົດຢືນຢັນໃນລະບົບ TAXRIS ເປັນຫົວໜ່ວຍເຄື່ອນໄຫວເລີຍ;
4. ກໍລະນີຫົວໜ່ວຍວິສາຫະກິດດັ່ງກ່າວ ບໍ່ໄດ້ຂຶ້ນນຳການຄຸ້ມຄອງຂອງກົມສ່ວຍສາອາກອນ ແມ່ນຕ້ອງໄດ້ເຮັດສະໂນດນຳສົ່ງ ພ້ອມທັງຊຸດເອກະສານສຳນວນທັງໝົດສົ່ງໃຫ້ ສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ເພື່ອຮັບຮອງເຂົ້າໃນລະບົບໃຫ້ສຳເລັດ ແລະປະຕິບັດຕາມ ຂໍ້ທີ 2 ຂ້າງເທິງນີ້;
5. ສຳລັບສ່ວຍສາອາກອນປະຈຳເມືອງ, ນະຄອນ ທີ່ຍັງບໍ່ທັນມີລະບົບ TAXRIS ແມ່ນ ໃຫ້ເຮັດສະໂນດນຳສົ່ງໃຫ້ ສ່ວຍສາອາກອນຂັ້ນແຂວງ ເພື່ອຮັບຮອງເຂົ້າໃນລະບົບ ແລ້ວໂອນຫົວໜ່ວຍວິສາຫະກິດດັ່ງກ່າວ ຜ່ານລະບົບ TAXRIS ໃຫ້ຂັ້ນເມືອງຄືນ ແລະ ປັບປຸງລະບົບ ໃຫ້ຢູ່ໃນສະຖານະ "ຢຸດຕິການເຄື່ອນໄຫວ" ຂອງວິສາຫະກິດໄວ້ຊົ່ວຄາວ ແລະສ່ວຍສາອາກອນປະຈຳເມືອງ, ນະຄອນ ຕ້ອງໄດ້ເກັບກຳ, ຫົວໜ່ວຍສະຖິຕິທີ່ຕົນເອງຄຸ້ມຄອງໃຫ້ລະອຽດ ຄົບຖ້ວນ ແລະ ຖືກຕ້ອງ;
6. ສຳລັບ ການກຳນົດ 90 ວັນ ຕາມທີ່ໄດ້ກຳນົດໄວ້ ຂໍ້ 2 ຂອງແຈ້ງການແນະນຳ ສະບັບເລກທີ 5489/ກສອ, ລົງວັນທີ 17 ຕຸລາ 2018 ເພື່ອໃຫ້ວິສາຫະກິດທີ່ໄດ້ຮັບໃບທະບຽນວິສາຫະກິດພ້ອມກັບເລກລະຫັດປະຈຳຕົວຜູ້ເສຍອາກອນ ມາພົວພັນຫາລັດຖະການສ່ວຍສາອາກອນ ແມ່ນຍົກເລີກ, ແຕ່ຕ້ອງປະຕິບັດຕາມກົດໝາຍສ່ວຍສາອາກອນ ຢ່າງເຄັ່ງຄັດ;
7. ໃຫ້ສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງ, ປະຈຳເມືອງ, ນະຄອນ ລົບລ້າງ ຂັ້ນຕອນການປະຖົມນິເທດ ແລະ ໃຫ້ນຳໃຊ້ ຄຳແນະນຳການປະຕິບັດພັນທະອາກອນ ສຳລັບວິສາຫະກິດຂຶ້ນໃໝ່ ແທນ ຕາມທີ່ກຳນົດໄວ້ໃນຂໍ້ 1 ຂອງແຈ້ງການສະບັບນີ້;
8. ແຈ້ງການສະບັບນີ້ ປ່ຽນແທນ ແຈ້ງການແນະນຳ ສະບັບເລກທີ 5489/ກສອ, ລົງວັນທີ 17 ຕຸລາ 2018 ແລະມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນແຈ້ງການສະບັບນີ້ເປັນຕົ້ນໄປ.

ດັ່ງນັ້ນ ຈຶ່ງແຈ້ງມາເພື່ອປະຕິບັດຕາມແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ຮັກ. ຫົວໜ້າກົມ

ທຳມະລັດ ຣາຊະພົນ